ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ເລກທີ 005 /ສພທ.ທຄຕລ.2018
ນະຄອນຫຼວງວຽງຈັນ, ວັນທີ 27/04/2018

# ມະຕິ

## ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2017.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ຂຶ້ນໃນເວລາ 14:20 ໂມງ ຫາ 16:00 ໂມງ ຂອງວັນທີ 27 ເມສາ 2018 ທີ່ຫ້ອງປະຊຸມເບີ 04, ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ຄຳສຸກ ສູນດາລາ, ຮອງປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 73 ທ່ານ, ຜູ້ມອບສິດຈຳນວນ 144 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 177.132.786 ຮຸ້ນ, ນັບທັງ 825.083 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 85.273% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 30.590.514 ຮຸ້ນ ເທົ່າກັບ 14.727% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ກອງປະຊຸມ ໄດ້ພິຈາລະນາ ແລະ ມີມະຕິດັ່ງນີ້:

ວາລະທີ 1: ຮັບຊາບລາຍງານການປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນ ທຄຕລ ຄັ້ງຜ່ານມາ.
ວາລະທີ 2: ຮັບຊາບລາຍງານສະພາບພົ້ນເດັ່ນໃນການດຳເນີນງານຂອງ ທຄຕລ ປະຈຳປີ 2017.
ວາລະທີ 3: ຮັບຮອງແຜນການຂາຍຮຸ້ນ ທຄຕລ ທີ່ຖືໂດຍ ກະຊວງການເງິນ 19%.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 177.132.786 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ຮັບຮອງຜົນການດຳເນີນທຸລະກິດຂອງ ທຄຕລ ໃນປີ 2017.

- ຍອດຊັບສິນ/ໜີ້ສິນ: 35.801.567 ລ້ານກີບ
- ຍອດສິນເຊື່ອທັງໝົດ: 22.586.284 ລ້ານກີບ
- ຍອດເງິນຝາກທັງໝົດ: 31.518.874 ລ້ານກີບ
- ກຳໄລກ່ອນອາກອນ: 373.186 ລ້ານກີບ
- ກຳໄລຫຼັງອາກອນ: 290.410 ລ້ານກີບ

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2925, ໂທລະສັບ: (856-21) 213200-1, 222495, 217 904, 217898-9
ແຟັກ: (856-21) 213202, 223012, 223245, Website: www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

- ເຫັນດີຈຳນວນ: 177.132.786 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ຮັບຮອງເງິນປັນຜົນຮຸ້ນ ທຄຕລ ປະຈຳປີ 2017.

ຫຼັງການຫັກກຳໄລຫຼັງອາກອນ ແລະ ສ້າງຄັງຕ່າງໆຕາມລະບຽບການແລ້ວ, ເງິນປັນຜົນໃຫ້ຜູ້ຖືຮຸ້ນ ທຄຕລ ທີ່ມີລາຍຊື່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນມື້ປິດປຶ້ມກຳນົດສິດຜູ້ຖືຮຸ້ນໃນການຮັບເງິນປັນຜົນ ແລະ ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2017 ໃນວັນທີ 05 ເມສາ 2018 ມີອັດຕາການປັນຜົນເທົ່າກັບ 712 ກີບ/ຮຸ້ນ. ການຈ່າຍເງິນປັນຜົນໃຫ້ສຳເລັດພາຍໃນ 5 ວັນລັດຖະການຫຼັງຈາກກອງປະຊຸມຄັ້ງນີ້.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 177.132.786 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະ 6: ຮັບຮອງສະມາຊິກສະພາບໍລິຫານ ທຄຕລ ຊຸດໃໝ່ ວາລະປີ 2018-2020 ດັ່ງນີ້:

1. ທ່ານ ປອ ບຸນເຫຼືອ ສິນໄຊວໍລະວົງ ຫົວໜ້າກົມນະໂຍບາຍການເງິນ ແລະ ນິຕິກຳ ເປັນປະທານ
2. ທ່ານ ຄຳສຸກ ສູນດາລາ ພະນັກງານອາວຸໂສ (ບຸກຄົນເອກະລາດພາຍນອກ) ເປັນຮອງປະທານ
3. ທ່ານ ພູຊົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ ເປັນກຳມະການ
4. ທ່ານ Marc Robert ຕາງໜ້າ COFIBRED ໃນນາມຄູ່ຮ່ວມຍຸດທະສາດ ເປັນກຳມະການ
5. ທ່ານ ພຸດທະຂັນ ຂັນຕີ ຮອງຫົວໜ້າຄັງເງິນແຫ່ງຊາດ ເປັນກຳມະການ
6. ທ່ານ ຮສ.ປອ ພູເພັດ ກ້ຽວພິລາວົງ ຮອງຄະນະບໍດີຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະໄລແຫ່ງຊາດ (ບຸກຄົນເອກະລາດພາຍນອກ) ເປັນກຳມະການ
7. ທ່ານ ວຽງສຸກ ຈຸນທະວົງ ຫົວໜ້າພະແນກຄຸ້ມຄອງສິນເຊື່ອ ເປັນກຳມະການ

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 177.132.786 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະ 7: ຮັບຮອງເອົາການປັບປຸງກົດລະບຽບຂອງ ທຄຕລ

ການປັບປຸງກົດລະບຽບຂອງ ທຄຕລ ເພື່ອໃຫ້ສອດຄ່ອງກັບທຶນຈົດທະບຽນໃໝ່ທີ່ໄດ້ເພີ່ມຂຶ້ນ ແລະ ເພື່ອໃຫ້ສອດຄ່ອງກັບການປັບປຸງເງື່ອນໄຂ, ສິດໜ້າທີ່ ແລະ ອົງປະກອບຂອງສະພາບໍລິຫານຂອງບໍລິສັດຈົດທະບຽນ ຕາມລະບຽບທີ່ ຄຄຊ ໄດ້ວາງອອກ. ພ້ອມທັງໄດ້ປັບປຸງຕື່ມບາງຈຸດປີກຍ່ອຍ ເພື່ອເຮັດໃຫ້ມີຄວາມຮັດກຸມທາງດ້ານກົດໝາຍ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງ ທຄຕລ ໃນໄລຍະໃໝ່ ເຊິ່ງກົດລະບຽບສະບັບນີ້ ໄດ້ກຳນົດຫຼັກການ, ວິທີການໃນການບໍລິຫານຈັດການ ກ່ຽວກັບ ຮຸ້ນ, ຜູ້ຖືຮຸ້ນ, ສະພາບໍລິຫານ, ເລຂານຸການບໍລິສັດ (ເລຂານຸການສະພາບໍລິຫານ), ຜູ້ອຳນວຍການ, ພະນັກງານ, ການແບ່ງປັນຜົນປະໂຫຍດ, ການແກ້ໄຂຂໍ້ຂັດແຍ່ງ, ການຍຸບເລີກ ແລະ ການຊຳລະສະສາງຂອງ ທຄຕລ ເພື່ອເປັນບ່ອນອີງດ້ານກົດໝາຍໃນການເຄື່ອນໄຫວດຳເນີນທຸລະກິດ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ 73 ຄົນ ເທົ່າກັບ 100% ຂອງຂາຮຸ້ນທີ່ເຂົ້າຮ່ວມກອງປະຊຸມທັງໝົດ ແລະ ເຫັນດີຈຳນວນ: 177.132.786 ສຽງ, ເທົ່າກັບ 85.273% ຂອງຈຳນວນຮຸ້ນທັງໝົດ.
- ບໍ່ເຫັນດີ 0 ຄົນ ເທົ່າກັບ 0% ຂອງຂາຮຸ້ນທີ່ເຂົ້າຮ່ວມກອງປະຊຸມທັງໝົດ ແລະ ບໍ່ເຫັນດີ 0 ສຽງ ເທົ່າກັບ 0% ຂອງຈຳນວນຮຸ້ນທັງໝົດ.

ວາລະທີ 8: ຮັບຮອງເອົາແຜນການປີ 2018 ຊຶ່ງມີບາງເປົ້າໝາຍການດຳເນີນທຸລະກິດທີ່ສຳຄັນດັ່ງນີ້:

- ຍອດຊັບສິນ: ເພີ້ມຂຶ້ນ 9% ທຽບໃສ່ຕົວເລກປະຕິບັດໄດ້ໃນປີ 2017,
- ຍອດເງິນຝາກ: ເພີ້ມຂຶ້ນ 5% ທຽບໃສ່ຕົວເລກປະຕິບັດໄດ້ໃນປີ 2017,
- ຍອດເງິນກູ້: ເພີ້ມຂຶ້ນ 8% ທຽບໃສ່ຕົວເລກປະຕິບັດໄດ້ໃນປີ 2017,
- ກຳໄລກ່ອນອາກອນ: 400 ຕື້ກີບ, ເພີ້ມຂຶ້ນ 7% ທຽບໃສ່ຕົວເລກປະຕິບັດໄດ້ໃນປີ 2017,
- ແຜນຮັບພະນັກງານໃໝ່ທົ່ວລະບົບຈຳນວນ 216 ຄົນ,
- ແຜນການຂະຫຍາຍຕາໜ່າງບໍລິການເພີ້ມ 1 ສາຂາ ແລະ 9 ໜ່ວຍບໍລິການໃນທົ່ວປະເທດ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 177.132.786 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 9: ຮັບຮອງເອົາ ບໍລິສັດເອີນແອນຢັງລາວ ຈຳກັດ ເປັນຜູ້ກວດສອບຖານະການເງິນຂອງ ທຄຕລ ປະຈຳປີ 2018, ໃນມູນຄ່າ 93,000 ໂດລາ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 177.132.786 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ມະຕິກອງປະຊຸມສະບັບນີ້ ຖືເປັນບ່ອນອີງສຳຄັນ ສຳລັບທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເພື່ອແຈ້ງໃຫ້ຜູ້ຖືຮຸ້ນ, ນັກລົງທຶນ, ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ນຳໄປຈັດຕັ້ງປະຕິບັດ.

ປະທານກອງປະຊຸມ

ຄຳສຸກ ສູນດາລາ